**ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ**

ບົດສະຫຼຸບການເຄື່ອນໄຫວທຸລະກິດ ປະຈຳໄຕມາດ 1 ປີ 2021

# I. ສະພາບລວມຂອງ ທຄຕລ

## 1. ວິໄສທັດ

ທຄຕລ ໄດ້ຮັບການປັບປຸງວິໄສທັດຂອງຕົນຄືນໃໝ່ ໃນແຜນຍຸດທະສາດໄລຍະຍາວ 2021 – 2025 ເພື່ອປະກອບເຂົ້າໃນການພັດທະນາວຽກງານຂອງຕົນໃຫ້ບັນລຸຕາມເປົ້າໝາຍ ແລະ ວັດຖຸປະສົງຄື: “ ເປັນທະນາຄານທີ່ເຂັ້ມແຂງ ທັນສະໄໝ ໄດ້ມາດຕະຖານສາກົນ”.

## 2. ພາລະກິດ

ເພື່ອເຮັດໃຫ້ ທຄຕລ ກາຍເປັນທະນາຄານທີ່ເຂັ້ມແຂງ ທັນສະໄໝ ໄດ້ມາດຕະຖານສາກົນ ນັ້ນ ພາລະກິດຫຼັກທີ່ສຳຄັນຂອງ ທຄຕລ ທີ່ຈະຕ້ອງໄດ້ສຸມໃສ່ ແມ່ນການພັດທະນາການປັບປຸງດ້ານບໍລິການໃຫ້ແທດເໝາະກັບໄລຍະການປ່ຽນໃໝ່, ສ້າງຄວາມເຂັ້ມແຂງໝັ້ນຄົງທາງດ້ານການເງິນ ແລະ ສອດຄ່ອງຕາມຫຼັກການບາເຊວ 2, ພັດທະນາລະບົບໄອທີ ແລະ ເທັກໂນໂລຊີທີ່ທັນສະໄໝ ເຂົ້າໃນລະບົບບໍລິການ, ພັດທະນາດ້ານລະບົບຂໍ້ມູນຂ່າວສານໃຫ້ຖືກຕ້ອງ, ຊັດເຈນ ໂປ່ງໃສ, ວ່ອງໄວ ແລະ ຮັບປະກັນຄວາມປອດໄພໄດ້ມາດຖານສາກົນ. ພ້ອມນັ້ນ, ກໍ່ເນັ້ນໃສ່ການພັດທະນາບຸກຄະລາກອນໃນແຕ່ລະດ້ານເພື່ອຮອງກັບການປ່ຽນແປງຂອງການພັດທະນາ ທຄຕລ ໃຫ້ມີຄວາມຊຳນິຊຳນານເປັນມືອາຊີບດ້ານການບໍລິການທະນາຄານ, ສ້າງຄວາມເພິ່ງພໍໃຈໃຫ້ກັບລູກຄ້າທີ່ມາໃຊ້ບໍລິການ ແລະ ສ້າງຜົນປະໂຫຍດສູງສຸດໃນແກ່ຜູ້ຖືຮຸ້ນ ທຄຕລ ແບບຍືນຍົງ.

### ❖ ແຜນງານ ແລະ ໂຄງການ 2021

ເພື່ອເຮັດໃຫ້ ທຄຕລ ໄດ້ພັດທະນາປັບປຸງ ແລະ ສ້າງຄວາມເຂັ້ມແຂງໝັ້ນຄົງຍືນຍົງ ກາຍເປັນທະນາຄານທີ່ນຳໜ້າໃນດ້ານຄວາມທັນສະໄໝ, ໄດ້ມາດຕະຖານສາກົນໃນລະບົບທະນາຄານ ໃນ ສປປ ລາວ. ທຄຕລ ໄດ້ກຳນົດຍຸດທະສາດການພັດທະນາ ເພື່ອກຳນົດບັນດາທິດທາງ, ຄາດໝາຍ ແລະ ແຜນການຈັດຕັ້ງປະຕິບັດລະອຽດ ເຊິ່ງໄດ້ແບ່ງອອກເປັນ 3 ຍຸດທະສາດໃຫຍ່, ປະກອບມີ 11 ແຜນງານ ແລະ 42 ໂຄງການ. ເຊິ່ງແຜນງານ ແລະ ໂຄງການທີ່ຈະຈັດຕັ້ງປະຕິບັດໃນປີ 2021 ມີ 11 ແຜນງານ, 42 ໂຄງການ ແລະ 268 ແຜນວຽກ ດັ່ງລາຍລະອຽດລຸ່ມນີ້:

- **ຍຸດທະສາດທີ 1: ສ້າງຄວາມເຂັ້ມແຂງໃຫ້ອົງກອນຢ່າງຮອບດ້ານ** (ປະກອບມີ 5 ແຜນງານ 25 ໂຄງການ ແລະ 149 ແຜນວຽກ)
  - ການບໍລິຫານການເງິນ ແລະ ເພີ່ມປະສິດທິພາບການດຳເນີນທຸລະກິດໃຫ້ຍືນຍົງ ປະກອບມີ 5 ໂຄງການ ແລະ 62 ແຜນວຽກ;
  - ການຄຸ້ມຄອງ ແລະ ບໍລິຫານສິນເຊື່ອ ປະກອບມີ 7 ໂຄງການ ແລະ 33 ແຜນວຽກ;
  - ການພັດທະນາບໍລິຫານບຸກຄະລາກອນ ໃຫ້ເຂັ້ມແຂງ ແລະ ມີປະສິທິພາບ ປະກອບມີ 5 ໂຄງການ ແລະ 26 ແຜນວຽກ;
  - ສ້າງລະບົບຄຸ້ມຄອງຄວາມສ່ຽງ ແລະ ສ້າງພື້ນຖານດ້ານການຝາກເງິນໃຫ້ເຂັ້ມແຂງ ປະກອບມີ 6 ໂຄງການ ແລະ 26 ແຜນວຽກ;
  - ພັດທະນາການຄຸ້ມຄອງບໍລິຫານໃຫ້ໄດ້ມາດຖານສາກົນ ແລະ ສ້າງມາດຕະຖານໃຫ້ເປັນທະນາຄານອາຊຽນ Qualified ASEAN Bank (QAB) ປະກອບມີ 2 ໂຄງການ ແລະ 2 ແຜນວຽກ.

- **ຍຸດທະສາດທີ 2: ຍຸດທະສາດຫັນເປັນທັນສະໄໝ ໂດຍນຳໃຊ້ເຕັກໂນໂລຊີ ແລະ ນະວັດຕະກຳໃໝ່ໆໃນການດຳເນີນທຸລະກິດ ກ້າວສູ່ຍຸກເສດຖະກິດດິຈິຕອລ** (ປະກອບມີ 3 ແຜນງານ 12 ໂຄງການ ແລະ 107 ແຜນວຽກ)
    - ການພັດທະນາ ແລະ ການຄຸ້ມຄອງລະບົບໄອທີ ປະກອບມີ 5 ໂຄງການ ແລະ 25 ແຜນວຽກ;
    - ຄຸ້ມຄອງບໍລິຫານຂໍ້ມູນ ແລະ ການພັດທະນາວຽກງານສະຖິຕິ ໃຫ້ທັນສະໄໝໄດ້ມາດຖານສາກົນ ແລະ ມີຄຸນນະພາບ ປະກອບມີ 5 ໂຄງການ ແລະ 29 ແຜນວຽກ;
    - ພັດທະນາຜະລິດຕະພັນ ເພື່ອຫັນສູ່ການບໍລິການ ໃນຮູບແບບ Digital Banking ປະກອບມີ 2 ໂຄງການ ແລະ 53 ແຜນວຽກ;
- **ຍຸດທະສາດທີ 3: ຍຸດທະສາດສ້າງການຄຸ້ມຄອງ ແລະ ບໍລິການຕາມມາດຕະຖານສາກົນ** (ປະກອບມີ 3 ແຜນງານ 5 ໂຄງການ ແລະ 12 ແຜນວຽກ)
    - ການປັບປຸງ, ພັດທະນາລະບົບບັນຊີ ແລະ ມາດຕະຖານການລາຍງານການເງິນ ປະກອບມີ 3 ໂຄງການ ແລະ 6 ແຜນວຽກ;
    - ພັດທະນາ ແລະ ປັບປຸງລະບົບກວດກາໃຫ້ເຂັ້ມແຂງໄດ້ມາດຕະຖານ ປະກອບມີ 2 ໂຄງການ ແລະ 3 ແຜນວຽກ;
    - ພັດທະນາໂຄງການ PCI Compliance ຫຼື (Payment Card Industry Data Security Standard) ປະກອບມີ 3 ແຜນວຽກ;

## II. ຖານະການເງິນ ແລະ ຜົນດຳເນີນງານ

### 1. ເສດຖະກິດມະຫາພາກ ສປປ ລາວ ປີ 2020 ແລະ ແນວໂນ້ມ 2021

ເຖິງແມ່ນວ່າ ສປປ ລາວ ສາມາດຈຳກັດການແຜ່ລະບາດຂອງພະຍາດ COVID-19 ໄດ້ໃນວົງແຄບ ແຕ່ພາບລວມ ເສດຖະກິດຂອງລາວຕົກຢູ່ໃນສະພາວະຖົດຖອຍຄັ້ງທຳອິດນັບຕັ້ງແຕ່ວິກິດການເງິນຂອງອາຊີໃນທ້າຍຊຸມປີ 1990. ອີງຕາມຂໍ້ມູນຈາກສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ, ເສດຖະກິດຂອງລາວ ປີ 2020 ຂະຫຍາຍໂຕຊ້າລົງຈາກ 5,5% ໃນປີ 2019 ເຫຼືອ 3,3% ໃນປີ 2020, ລາຍໄດ້ສະເລ່ຍຕໍ່ຫົວຄົນ 2,664 ໂດລາສະຫະລັດ (ທຽບໃສ່ແຜນລັດຖະບານກຳນົດໄວ້ 2,978 ໂດລາສະຫະລັດ). ຂະແໜງອຸດສາຫະກຳ ເປັນຂະແໜງຫຼັກທີ່ຂັບເຄື່ອນການເຕີບໂຕຂອງເສດຖະກິດ ໂດຍຂະຫຍາຍໂຕໃນລະດັບ 9,8% ພົ້ນເດັ່ນກວ່າໝູ່ແມ່ນຂະແໜງພະລັງງານໄຟຟ້າ ຂະຫຍາຍໂຕ 22,6%, ຂະແໜງກໍ່ສ້າງ 11,7% ໂດຍສະເພາະໂຄງການທີ່ຕິດພັນກັບເສັ້ນທາງລົດໄຟລາວ-ຈີນ ແລະ ການສຳເລັດການກໍ່ສ້າງທາງດ່ວນວຽງຈັນ-ວັງວຽງ, ສ່ວນຂະແໜງກະສິກຳຂະຫຍາຍຕົວເພີ່ມຂຶ້ນ 2,3%. ເຖິງຢ່າງ ໃດກໍ່ຕາມ, ຂະແໜງບໍລິການຂະຫຍາຍໂຕຕິດລົບ 1,6% ເນື່ອງຈາກການບໍລິການທ່ອງທ່ຽວ, ຮ້ານອາຫານ ແລະ ການບໍລິການທີ່ພັກອາໃສ ໄດ້ຮັບຜົນກະທົບຢ່າງໜັກໜ່ວງຈາກສະພາບການລະບາດຂອງພະຍາດ COVID-19 ໂດຍສະເພາະການບໍລິການໃຫ້ແກ່ນັກທ່ອງທ່ຽວຕ່າງປະເທດ.

ໃນປີ 2021, ແນວໂນ້ມເສດຖະກິດມະຫາພາກ ຂອງ ລາວ ຄາດວ່າຈະຂະຫຍາຍໂຕທີ່ລະດັບ 4% ໂດຍປັດໄຈສະໜັບສະໜູນແມ່ນຂະແໜງການບໍລິການ ເນື່ອງຈາກສະພາບການທ່ອງທ່ຽວພາຍໃນເລີ່ມກັບມາມີບັນຍາກາດຟົດຟື້ນໃນໄຕມາດ 01/2021 ບວກກັບການເປີດນຳໃຊ້ເສັ້ນທາງດ່ວນວຽງຈັນ-ວັງວຽງ. ນອກຈາກນັ້ນ, ສະຖານະການ ການແຜ່ລະບາດຂອງພະຍາດ COVID-19 ສາມາດຄວບຄຸມໄດ້ນັບແຕ່ທ້າຍປີ 2020 ຫາ ຕົ້ນປີ 2021 ແລະ ການສັກວັກຊີນໃຫ້ປະຊາຊົນໃນກຸ່ມສ່ຽງເພື່ອປ້ອງການພະຍາດດັ່ງກ່າວ ໄດ້ລິເລີ່ມຈັດຕັ້ງປະຕິບັດມາແຕ່ຕົ້ນປີ ສິ່ງຜົນໃຫ້ແນວໂນ້ມເສດຖະກິດໃນປີ 2021 ມີທ່າອ່ຽງຟື້ນຕົວໄວ. ເຖິງຢ່າງໃດກໍ່ຕາມ, ສະພາບ

ເສດຖະກິດຂອງ ລາວ ຍັງມີຄວາມອ່ອນໄຫວ ເນື່ອງຈາກຄວາມບອບບາງທາງດ້ານງົບປະມານຂອງລັດ ແລະ ລະດັບຄັງສຳຮອງເງິນຕາຕ່າງປະ ເທດທີ່ມີຈຳກັດ. ນອກຈາກນັ້ນ, ການລະບາດຂອງພະຍາດ COVID-19 ຮອບ 02 ໃນປະເທດໃກ້ຄຽງ ຍັງເປັນປັດໄຈສ່ຽງ ເຊິ່ງອາດຈະສົ່ງຜົນກະທົບຕໍ່ເສດຖະກິດ ທາງກົງ ແລະ ທາງອ້ອມໃນຕໍ່ໜ້າ.

## 2. ການເຄື່ອນໄຫວທີ່ພົ້ນເດັ່ນໂດຍຫຍໍ້ ຂອງ ທຄຕລ

ພາຍໃນໄຕມາດ 01/2021 ທີ່ຜ່ານມາ ທຄຕລ ສາມາດປະຕິບັດວຽກງານທີ່ພົ້ນເດັ່ນຄື: ສຳເລັດການສະຫຼຸບຜົນການດຳເນີນທຸລະກິດ ທຄຕລ ປະຈຳປີ 2020 ແລະ ຮັບຮອງແຜນການດຳເນີນທຸລະກິດ ປະຈຳປີ 2021 ໃນເບື້ອງຕົ້ນ; ຈັດກອງປະຊຸມທົບທວນຜົນການດຳເນີນທຸລະກິດ 1 ຄັ້ງ, ກອງປະຊຸມສະພາບໍລິຫານ ທຄຕລ ສາມັນປະຈຳປີ 2020 ຈຳນວນ 1 ຄັ້ງ, ວິສາມັນ 2 ຄັ້ງ ແລະ ກອງປະຊຸມສະຫຼຸບການຈັດຕັ້ງປະຕິບັດວຽກງານກວດກາ ປະຈຳປີ 2020 ແລະ ແຜນການປີ 2021. ພ້ອມນີ້, ສຳເລັດການອອກຂໍ້ຕົກລົງວ່າດ້ວຍການຈັດຂັ້ນສາຂາ ແລະ ໜ່ວຍບໍລິການ ທຄຕລ ປະຈຳປີ 2021; ອອກຂໍ້ຕົກລົງຮັບຮອງແຜນດຳເນີນທຸລະກິດ ທຄຕລ ປະຈຳປີ 2021 (ສຳລັບສາຂາ ທຄຕລ ທົ່ວລະບົບ); ສຳເລັດການຮັບຮອງແຜນຍຸດທະສາດ ທຄຕລ 2021-2025 ໃນເບື້ອງຕົ້ນ ເຊິ່ງລໍຖ້າຮັບຮອງໃນກອງປະຊຸມຜູ້ຖືຮຸ້ນ ທຄຕລ ແລະ ສຳເລັດການຮັບຮອງລະບຽບ ແລະ ບັນດາ DATA Dictionary ຂອງໂຄງການ DATA Governance ຂອງ ທຄຕລ. ນອກນັ້ນ, ກໍ່ສຳເລັດການພັດທະນາຜະລິດຕະພັນພາຍໃນຄື: ສຳເລັດການພັດທະນາ ແລະ ໄດ້ຈັດພິທີເປີດໂຕຜະລິດຕະພັນບັດ ATM UnionPay ປ່ຽນມາເປັນບັດຊິບ (Chip). ພ້ອມທັງສຳເລັດການພັດທະນາລະບົບເຊື່ອມຕໍ່ ແລະ ໂອນເງິນຮ່ວມກັບບໍລິສັດ Umoney & MMoney. ສ່ວນທາງດ້ານການຮ່ວມທຸລະກິດກັບພາຍນອກ ໄດ້ເຊັນສັນຍາຮ່ວມມືລະຫວ່າງ ທຄຕລ ແລະ ບໍລິສັດເອັມພອຍມາກການຄ້າ ຈຳກັດ (Mini Big C) ວ່າດ້ວຍການຊຳລະສະສາງສິນຄ້າ ແລະ ບໍລິການຜ່ານ QR Code.

## 3. ຂໍ້ມູນການທາງດ້ານການເງິນທີ່ສຳຄັນຂອງ ທຄຕລ

ປີ 2021 ເປັນອີກປີໜຶ່ງທີ່ການດຳເນີນທຸລະກິດຂອງ ທຄຕລ ຍັງຄົງສືບຕໍ່ພົບກັບຄວາມຫຍຸ້ງຍາກ ແລະ ທ້າທາຍຫຼາຍດ້ານ ພາຍໃຕ້ສະພາບການລະບາດຂອງພະຍາດ COVID-19 ທີ່ຍັງຄົງລະບາດເປັນວົງກວ້າງ, ແຕ່ເຖິງຢ່າງໃດກໍ່ຕາມ ທຄຕລ ໄດ້ອອກແຮງສູ້ຊົນໃນການຈັດຕັ້ງປະຕິບັດຜົນການດຳເນີນທຸລະກິດ ຕາມແຜນການທີ່ໄດ້ຮັບຮອງຈາກສະພາບໍລິຫານ ເຊິ່ງມີຕົວເລກການປະຕິບັດ ຮອດໄຕມາດ 01/2021 ບໍ່ທັນຜ່ານການກວດສອບ ດັ່ງນີ້:

- **ຍອດຊັບສິນ/ໜີ້ສິນ:** 57.536.018 ລ້ານກີບ, ທຽບໃສ່ແຜນການປີ 2021 ປະຕິບັດໄດ້ 101%ທຽບໃສ່ໄລຍະດຽວກັນຂອງປີຜ່ານມາເພີ່ມຂຶ້ນ 18%;
- **ຍອດເງິນກູ້ທັງໝົດ:** 29.108.711 ລ້ານກີບ, ທຽບໃສ່ແຜນການປີ 2021 ປະຕິບັດໄດ້ 98% ທຽບໃສ່ໄລຍະດຽວກັນຂອງປີຜ່ານມາເພີ້ມຂຶ້ນ 5%;
- **ຍອດເງິນຝາກ:** 51.943.690 ລ້ານກີບ, ທຽບໃສ່ແຜນການປີ 2021 ປະຕິບັດໄດ້ 103%; ທຽບໃສ່ໄລຍະດຽວກັນຂອງປີຜ່ານມາເພີ່ມຂຶ້ນ 21%;
- **ທຶນທັງໝົດ:** 2.195.585 ຕື້ກີບ ທຽບໃສ່ແຜນການປີ 2021 ປະຕິບັດໄດ້ 82%; ທຽບໃສ່ໄລຍະດຽວກັນຂອງປີຜ່ານມາເພີ່ມຂຶ້ນ 5%;
- **ກຳໄລກ່ອນອາກອນ:** 71.674 ລ້ານກີບ, ທຽບໃສ່ແຜນການປີ 2021 ປະຕິບັດໄດ້ 23%;
- **ກຳໄລຫຼັງອາກອນ:** 55.583 ລ້ານກີບ, ທຽບໃສ່ແຜນການປີ 2021 ປະຕິບັດໄດ້ 22%.

## III. ຂໍ້ມູນທົ່ວໄປ ແລະ ຂໍ້ມູນສຳຄັນບາງດ້ານ ຂອງ ທຄຕລ

- **ທີ່ຕັ້ງ ແລະ ເຄືອຂ່າຍ**

ສຳນັກງານໃຫຍ່ຂອງທະນາຄານ ຕັ້ງຢູ່ເລກທີ 01, ຖະໜົນປາງຄຳ, ບ້ານຊຽງຍືນ, ເມືອງຈັນທະບູລີ, ນະຄອນ ຫຼວງວຽງຈັນ

**ຕິດຕໍ່ ແລະ ພົວພັນ ສອບຖາມຂໍ້ມູນຕ່າງໆຂອງ ທຄຕລ**

- ເບີໂທ (+856-21) 213200 ຫຼື ໂທ 1555
- ແຟັກ (+856-21) 213202
- ອີເມວ: bcelhqv@bcel.com.la
- ເວັບໄຊ: www.bcel.com.la

- **ປະຫວັດຄວາມເປັນມາໂດຍຫຍໍ້ ຂອງ ທຄຕລ**

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ດຳເນີນທຸລະກິດໃນຮູບແບບມະຫາຊົນ ແລະ ຈົດທະບຽນຢູ່ໃນຕະຫຼາດຫຼັກຊັບ ສປປ ລາວ.

ທະນາຄານການຄ້າຕ່າງປະເທດລາວ ໄດ້ຮັບການສ້າງຕັ້ງຂຶ້ນພາຍໃຕ້ໃບອະນຸຍາດສ້າງຕັ້ງທະນາຄານ ເລກທີ 129/ທຫລ, ລົງວັນທີ 01 ພະຈິກ 1989, ໃນວັນທີ 23 ທັນວາ 2010 ທະນາຄານໄດ້ສຳເລັດການຂາຍຮຸ້ນອອກສູ່ມະຫາຊົນ. ທະນາຄານໄດ້ປ່ຽນຊື່ມາເປັນ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ອີງຕາມໃບທະບຽນວິສາຫະກິດ ເລກທີ 0061/ຫຈທ, ລົງວັນທີ 10 ມັງກອນ 2011 ອອກໂດຍກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ, ກະຊວງອຸດສາຫະກຳ ແລະ ການຄ້າ ຂອງ ສປປ ລາວ. ພ້ອມດຽວກັນນັ້ນ, ກະຊວງການເງິນໄດ້ຕາງໜ້າໃຫ້ລັດຖະ ບານເປັນຜູ້ຖືຮຸ້ນໃຫຍ່ສຸດໂດຍຖືຮຸ້ນ 80% ຂອງຮຸ້ນທັງໝົດ.

ວັນທີ 15 ກໍລະກົດ 2011, ກະຊວງການເງິນ ຂາຍຮຸ້ນສາມັນ 10% ໃຫ້ຄູ່ຮ່ວມຍຸດທະສາດ ຊື່ວ່າ ທະນາຄານ COFIBRED ອີງຕາມສັນຍາການຊື້-ຂາຍຮຸ້ນສາມັນ ລະຫວ່າງ ກະຊວງການເງິນ ແລະ ທະນາຄານ COFIBRED.

ໃນວັນທີ 17 ສິງຫາ 2017 ທຄຕລ ໄດ້ສະເໜີຂາຍຮຸ້ນໃຫ້ແກ່ຜູ້ຖືຮຸ້ນເດີມ ແລະ ຂາຮຸ້ນໃໝ່ ເພື່ອເພີ່ມທຶນຈົດທະບຽນ. ທະນາຄານໄດ້ຮັບຂໍ້ຕົກລົງສະບັບໃໝ່ ເລກທີ 21/ທຫລ, ລົງວັນທີ 13 ກັນຍາ 2017 ອອກໂດຍທະນາຄານແຫ່ງ ສປປ ລາວ. ໃນວັນທີ 15 ກັນຍາ 2017 ຕະຫຼາດຫຼັກຊັບລາວໄດ້ຢັ້ງຢືນວ່າທະນາຄານໄດ້ເພີ່ມທຶນຈົດທະບຽນຈຳນວນ 355.728.500.000 ກີບ (71.145.700 ຮຸ້ນ) ຕາມໃບຢັ້ງຢືນເລກທີ 01/ຕລຊລ, ລົງວັນທີ 15 ກັນຍາ 2017 ແລະ ໃບທະບຽນວິສາຫະກິດສະບັບປັບປຸງໃຫມ່ ເລກທີ 0429/ຫຈທ, ລົງວັນທີ 18 ພຶດສະພາ 2018 ອອກໂດຍ ກະຊວງອຸດສາຫະກຳ ແລະ ການຄ້າ.

ໃນວັນທີ 11 ຕຸລາ 2019 ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບໄດ້ເຊັນອະນຸມັດໃຫ້ທະນາຄານປັບປຸງໂຄງສ້າງຜູ້ຖືຮຸ້ນໂດຍການສະເໜີຂາຍສິດຊື້ຮຸ້ນໃຫ້ແກ່ຜູ້ຖືຮຸ້ນເດີມ ແລະ ສາທາລະນະຊົນ. ຈຸດປະສົງຂອງການແບ່ງຮຸ້ນຂາຍຂອງລັດຖະບານ ແມ່ນເພື່ອສະໜັບສະໜູນສະເໜີຂາຍໃຫ້ແກ່ຜູ້ຖືຮຸ້ນທີ່ຫຼາກຫຼາຍ ເພື່ອພັດທະນາທະນາຄານໃຫ້ເຕີບໃຫຍ່ຂະຫຍາຍຕົວ ແລະ ໝັ້ນຄົງ. ພ້ອມດຽວກັນນັ້ນໃນວັນທີ 29 ພະຈິກ 2019 ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບໄດ້ຢັ້ງຢືນວ່າ ທະນາຄານໄດ້ສຳເລັດການສະເໜີຂາຍຮຸ້ນໃນອັດຕາສ່ວນ 10% ຂອງທະນາຄານໄດ້ສຳເລັດ.

ປະຈຸບັນ ໂຄງສ້າງການຖືຮຸ້ນຂອງທະນາຄານ: ລັດຖະບານຖືຮຸ້ນ 60% ຮຸ້ນ, ນັກລົງທຶນພາຍໃນ (ລວມທັງພະນັກງານ ທຄຕລ) ແລະ ນັກລົງທຶນຕ່າງປະເທດ 30% ແລະ ຄູ່ຮ່ວມຍຸດທະສາດ 10%.

ກິດຈະກຳຫລັກຂອງທະນາຄານ ແມ່ນເພື່ອສະໜອງການບໍລິການ ລວມທັງການລະດົມທຶນ ແລະ ຮັບຝາກເງິນໄລຍະສັ້ນ, ກາງ ແລະ ຍາວ ຈາກນິຕິບຸກຄົນ ແລະ ບຸກຄົນ; ສະໜອງເງິນກູ້ໄລຍະສັ້ນ, ກາງ, ຍາວ ໃຫ້ແກ່ຫົວໜ່ວຍທຸລະກິດ ແລະ ບຸກຄົນຕາມຈຸດປະສົງ ແລະ ຄວາມສາມາດໃນການສະໜອງທຶນຂອງທະນາຄານ; ບໍລິການແລກປ່ຽນເງິນຕາຕ່າງປະເທດ, ບໍລິການຊຳລະສະສາງ, ການບໍລິການການຄ້າລະຫວ່າງປະເທດ, ບໍລິການໜັງສືສິນເຊື່ອ, ຄ້ຳປະກັນ, ໃຫ້ບໍລິການຊື້ຂາຍວັດຖຸມີຄ່າອື່ນໆ ແລະ ໃຫ້ບໍລິການດ້ານທະນາຄານອື່ນໆທີ່ໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປ ລາວ ໂດຍສະເພາະແມ່ນບໍລິການດ້ານປະກັນໄພ, ບໍລິການເປັນນາຍໜ້າຊື້ຂາຍຫຼັກຊັບເປັນຕົ້ນ.

**ທຶນຈົດທະບຽນ**

ທຶນຈົດທະບຽນ ນະວັນທີ 31 ມີນາ 2021 ແມ່ນ 1.038.617 ລ້ານກີບ (31 ທັນວາ 2020 : 1.038.617 ລ້ານກີບ).

## IV. ໂຄງຮ່າງການຈັດຕັ້ງ ສະພາບໍລິຫານ, ຄະນະອຳນວຍການ ແລະ ການເຄື່ອນໄຫວຂອງຄະນະກຳມະການຂຶ້ນກັບສະພາບໍລິຫານ

### 1. ໂຄງຮ່າງການຈັດຕັ້ງ ແລະ ປະຫວັດໂດຍຫຍໍ້ ຂອງສະມາຊິກສະພາບໍລິຫານ

#### 1.1 ສະພາບໍລິຫານ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ປະກອບດ້ວຍ 7 ທ່ານ:

| | |
|---|---|
| - ທ່ານ ປອ ບຸນເຫຼືອ ສິນໄຊວໍລະວົງ | ເປັນປະທານ |
| - ທ່ານ ຄຳສຸກ ສູນດາລາ | ເປັນຮອງປະທານ |
| - ທ່ານ ພູຊົງ ຈັນທະຈັກ | ເປັນສະມາຊິກ |
| - ທ່ານ Stephane Mangiavacca | ເປັນສະມາຊິກ |
| - ທ່ານ ພຸດທະຊັນ ຊັນຕິ | ເປັນສະມາຊິກ |
| - ທ່ານ ຮອງສາດສະດາຈານ ປອ ພູເພັດ ກ້ຽວພິລະວົງ | ເປັນສະມາຊິກ |
| - ທ່ານ ວຽງສຸກ ຈຸນທະວົງ | ເປັນສະມາຊິກ |

#### 1.2. ປະຫວັດຫຍໍ້ຂອງສະພາບໍລິຫານ

❖ **ທ່ານ ປອ ບຸນເຫຼືອ ສິນໄຊວໍລະວົງ: ເປັນປະທານ**



- ວັນເດືອນປີເກີດ: 24/11/1966
- ສັນຊາດ: ລາວ
- ພາສາ: ລາວ, ອັງກິດ
- ຕຳແໜ່ງປະຈຸບັນ: ຮອງລັດຖະມົນຕີ ກະຊວງການເງິນ

- ລະດັບການສຶກສາ: ປະລິນຍາເອກ, ປະລິນຍາໂທດ້ານເສດຖະສາດ ທີ່ມະຫາວິທະຍາໄລແຫ່ງຊາດອິດສະຕາລີ ປະເທດອິດສະຕາລີ, ປະລິນຍາໂທດ້ານບໍລິຫານທຸລະກິດທີ່ມະຫາວິທະຍາໄລທຳມະສາດ, ປະເທດໄທ, ປະລິນຍາຕີ, ປະລິນຍາໂທດ້ານຟີຊິກ ແລະ ເລຂາຄະນິດທີ່ມະຫາວິທະຍາໄລມົດສະກູ ປະເທດລັດເຊຍ.

❖ **ທ່ານ ຄຳສຸກ ສູນດາຣາ: ຮອງປະທານສະພາບໍລິຫານ**



- ວັນເດືອນປີເກີດ: 03/06/1945
- ສັນຊາດ: ລາວ
- ພາສາ: ລາວ, ອັງກິດ, ຝຣັ່ງ
- ຕຳແໜ່ງ: ກຳມະການອິດສະຫຼະ
- ປະຫວັດການສຶກສາ: ມະຫາວິທະຍາໄລຈອດສ໌ທາວທີ່ນະຄອນວໍຊິງຕັນປະເທດສະຫະລັດອາເມລິກາ, ສະຖາບັນຄຸ້ມຄອງທະນາຄານແຫ່ງອິນເດຍ ທີ່ເມືອງປານາ ປະເທດອິນເດຍ ແລະ ລະດັບປະລິນຍາຕີ ຈາກປະເທດ ອິດສະຕາລີ, ມະຫາວິທະຍາໄລນິວຊາວເວວ.

❖ **ທ່ານ ຣສຈ ປອ ພູເພັດ ກ້ຽວພິລາວົງ: ກຳມະການອິດສະຫຼະ**



- ວັນເດືອນປີເກີດ: 05/02/1974
- ສັນຊາດ: ລາວ
- ພາສາ: ລາວ, ອັງກິດ, ຍີ່ປຸ່ນ
- ຕຳແໜ່ງ: ຄະນະບໍດີ, ຄະນະເສດຖະສາດ ແລະ ບໍລິຫານທຸລະກິດ ມະຫາວິທະຍາໄລແຫ່ງຊາດ
- ລະດັບການສຶກສາ: ປະລິນຍາເອກເສດຖະສາດ ມະຫາວິທະຍາໄລໂຄເບ, ປະເທດຍີ່ປຸ່ນ; ປະລິນຍາໂທ ແລະ ປະລິນຍາຕີ ວິສະວະກຳໂຍທາ ມະຫາວິທະຍາໄລ ໂອສະກາ, ປະເທດຍີ່ປຸ່ນ

❖ **ທ່ານ ພຸດທະຂັນ ຂັນຕິ : ກຳມະການ**



- ວັນເດືອນປີເກີດ: 02/05/1970
- ສັນຊາດ: ລາວ
- ພາສາ: ລາວ, ຫວຽດນາມ ແລະ ລັດເຊຍ
- ຕຳແໜ່ງ: ຮອງຫົວໜ້າຄັງເງິນແຫ່ງຊາດ ກະຊວງການເງິນ
- ລະດັບການສຶກສາ: ປະລິນຍາໂທ ທີ່ສະຖາບັນການເງິນຮ່າໂນ້ຍ, ສສ ຫວຽດນາມ ແລະ ທາ ວິທະຍາໄລ ດາແກັດສະຕານ ອາດີດສະຫະພາບໂຊຫວຽດ

❖ **ທ່ານ ພູຂີງ ຈັນທະຈັກ : ກຳມະການ**



- ວັນເດືອນປີເກີດ: 17/06/1964
- ສັນຊາດ: ລາວ
- ພາສາ: ລາວ, ອັງກິດ ແລະ ຮັງກາລີ .
- ຕຳແໜ່ງ: ຜູ້ອຳນວຍການໃຫຍ່ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
- ລະດັບການສຶກສາ: ຊັ້ນສູງທິດສະດີການເມືອງ ຈາກໂຮງຮຽນການເມືອງ-ການປົກຄອງ ແລະ ປະລິນຍາໂທ ດ້ານເສດຖະກິດການເງິນຈາກປະເທດ ຮັງກາລີ.

❖ **ທ່ານ Stephane MANGIAVACCA: ກຳມະການ**



- ວັນເດືອນ ປີເກີດ: 11/07/1975
- ສັນຊາດ: ຝຣັ່ງ
- ພາສາ: ຝຣັ່ງ, ອັງກິດ, ສະເປນ, ຈີນ ແລະ ຍີ່ປຸ່ນ
- ຕຳແໜ່ງ: ຫົວໜ້າຝ່າຍທຸລະກິດຕ່າງປະເທດ, ຕາງໜ້າທະນາຄານ COFIBRED ໃນນາມຄູ່ຮ່ວມຍຸດທະສາດ ຂອງ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ.
- ລະດັບການສຶກສາ: ສຶກສາທີ່ມະຫາວິທະຍາໄລ Ecole Nationale Superieure des Mines de Saint-Etienne, ຈົບປະລິນຍາຕີເສດຖະສາດ, ຈົບຊັ້ນສູງສາຂາ ວິສະວະກຳສາດ ດ້ອຍກຽດນິ

ຍີມ ແລະ ເຂົ້າຮ່ວມໂຄງການແລກປ່ຽນກ່ຽວກັບວິສະວະກຳສິ່ງແວດລ້ອມ ທີ່ University of New Brunswick ປະເທດ Canada.

❖ **ທ່ານ ວຽງສຸກ ຈຸນທະວົງ: ກຳມະການ**



- ວັນເດືອນປີເກີດ: 15/08/1964
- ສັນຊາດ: ລາວ
- ພາສາ: ລາວ, ອັງກິດ ແລະ ເຊັກໂກ
- ຕຳແໜ່ງ: ຮອງຜູ້ອຳນວຍການ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
- ລະດັບການສຶກສາ: ບຳລຸງທິດສະດີການເມືອງ 45 ວັນຈາກໂຮງຮຽນ ການເມືອງ - ການປົກຄອງ ແລະ ປະລິນຍາໂທ ສາຂາເສດຖະກິດການຄ້າຈາກສາທາລະນະລັດເຊກ

## 2. ໂຄງຮ່າງການຈັດຕັ້ງຂອງຄະນະອຳນວຍການ

### 2.1 ຄະນະອຳນວຍການ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ: ປະກອບມີ 5 ທ່ານ

- ທ່ານ ພູຂົງ ຈັນທະຈັກ ຜູ້ອຳນວຍການໃຫຍ່
- ທ່ານ ລາໃຈ ຄັນພຣະວົງສ໌ ຮອງຜູ້ອຳນວຍການ
- ທ່ານ ບັນທະລາດ ແກ້ວປະເສີດ ຮອງຜູ້ອຳນວຍການ
- ທ່ານ ສຸພັກ ຖິ່ນໄຊພອນ ຮອງຜູ້ອຳນວຍການ
- ທ່ານ ວຽງສຸກ ຈຸນທະວົງ ຮອງຜູ້ອຳນວຍການ

## 2.2 ໂຄງຮ່າງຄະນະອຳນວຍການ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ



ທ່ານ ພູຂົງ ຈັນທະຈັກ
ຜູ້ອຳນວຍການໃຫຍ່



ທ່ານ ລາໃຈ ຄັນພະວົງສ໌
ຮອງ ຜູ້ອຳນວຍການ



ທ່ານ ນັນທະລາດ ແກ້ວປະເສີດ
ຮອງ ຜູ້ອຳນວຍການ



ທ່ານ ວຽງສຸກ ຈຸນທະວົງ
ຮອງ ຜູ້ອຳນວຍການ



ທ່ານ ສຸພົກ ຖິ່ນໄຊພອນ
ຮອງ ຜູ້ອຳນວຍການ

# 3. ການເຄື່ອນໄຫວຂອງສະພາບໍລິຫານ ແລະ ຄະນະກຳມະການທີ່ຂຶ້ນກັບສະພາບໍລິຫານ

## 3.1 ກອງປະຊຸມສະພາບໍລິຫານ

ໄຕມາດ 01/2021 ສະພາບໍລິຫານ ໄດ້ດຳເນີນກອງປະຊຸມຂອງຕົນເອງລວມທັງໝົດ 03 ຄັ້ງ (ສາມັນ 01 ຄັ້ງ ແລະ ວິສາມັນ 02 ຄັ້ງ) ໂດຍສາມາດສັງລວມການ ເຄື່ອນໄຫວທີ່ສຳຄັນໄດ້ດັ່ງນີ້:

- ພິຈາລະນາ ແລະ ໃຫ້ທິດຊີ້ນຳ ກ່ຽວກັບການຊົດເຊີຍມູນຄ່າທີ່ດິນຂອງ ທຄຕລ ທີ່ຖືກຜົນກະທົບຈາກໂຄງການທາງດ່ວນໝາຍເລກ 1;
- ພິຈາລະນາ ແລະ ຕົກລົງກ່ຽວກັບການສະເໜີກູ້ຢືມເງິນຂອງລູກຄ້າລາຍໃຫຍ່ ຈຳນວນໜຶ່ງ;
- ຮັບຮອງແຜນການດຳເນີນທຸລະກິດປະຈຳປີ 2021 ຂອງ ທຄຕລ ເພື່ອນຳສະເໜີກອງປະຊຸມຜູ້ຖືຮຸ້ນພິຈາລະນາຮັບຮອງ;
- ຮັບຮອງການປັບປຸງກົດລະບຽບ ທຄຕລ ເພື່ອນຳສະເໜີກອງປະຊຸມຜູ້ຖືຮຸ້ນພິຈາລະນາຮັບຮອງ;
- ຮັບຮອງສ່ວນການແບ່ງປັນກຳໄລຫຼັງອາກອນປະຈຳປີ 2020 ສຳລັບຈ່າຍເງິນປັນຜົນ ແລະ ຫັກເຂົ້າຄັງຕ່າງໆຕາມລະບຽບການ ເພື່ອນຳສະເໜີກອງປະຊຸມຜູ້ຖືຮຸ້ນພິຈາລະນາຮັບຮອງ;
- ພິຈາລະນາ ແລະ ຮັບຮອງແຜນຈັດກອງປະຊຸມຜູ້ຖືຮຸ້ນປະຈຳປີ 2020 ໂດຍກຳນົດຈັດຂຶ້ນໃນເວລາ 14:00 ໂມງ ຂອງວັນທີ 30 ເມສາ 2021 ທີ່ໂຮງແຮມເມືອງແທ້ງ, ນະຄອນຫຼວງວຽງຈັນ;

- ໃຫ້ທິດຊີ້ນຳກ່ຽວກັບການຄຸ້ມຄອງຕິດຕາມລູກຄ້າສິນເຊື່ອລາຍໃຫຍ່ຂອງ ທຄຕລ, ລູກຄ້າສິນເຊື່ອທີ່ລົງທຶນກ່ຽວກັບໂຄງການກໍ່ສ້າງເຂື່ອນໄຟຟ້າ, ລູກຄ້າສິນເຊື່ອຂອງ ທຄຕລ ທີ່ໄດ້ຮັບຜົນກະທົບຈາກພະຍາດລະບາດ covid-19 ແລະ ທິດທາງການແກ້ໄຂໃນໄລຍະຍາວ;
- ພິຈາລະນາ ແລະ ຮັບຮອງການຄັດເລືອກບໍລິສັດກວດສອບພາຍນອກ ເພື່ອນຳສະເໜີກອງປະຊຸມຜູ້ຖືຮຸ້ນປະຈຳປີ 2020 ແຕ່ງຕັ້ງເປັນຜູ້ກວດສອບອິດສະລະຂອງ ທຄຕລ ປະຈຳປີ 2021.

**3.2 ຄະນະກຳມະການຄຸ້ມຄອງຄວາມສ່ຽງ**

ຄະນະກຳມະການ ໄດ້ເອົາໃຈໃສ່ໃນການໃຫ້ຄຳແນະນຳໃນການຄົ້ນຄວ້າ ແລະ ກຳນົດບັນດາລະບຽບການ ແລະ ນະໂຍບາຍດ້ານການຄຸ້ມຄອງຄວາມສ່ຽງ ພ້ອມທັງໄດ້ພິຈາລະນາຮັບຮອງເອົາບັນດານະໂຍບາຍ ແລະ ກົດລະບຽບທີ່ຕິດພັນກັບວຽກງານຄຸ້ມຄອງຄວາມສ່ຽງ ດັ່ງນີ້:

- ຄະນະກຳມະການໄດ້ຄົ້ນຄວ້າ ແລະ ສະເໜີໃຫ້ມີການຊະລໍບັນດາລາຍການອະນຸມັດເງິນກູ້ໄລຍະຍາວ ທີ່ກ່ຽວພັນກັບໂຄງ ການເຂື່ອນໄຟຟ້າ ສຳລັບໂຄງການໃດຫາກຈະມີການອະນຸມັດ ແມ່ນໃຫ້ມີການວາງເງື່ອນໄຂຊັດເຈນ ຫຼື ມີການໃຫ້ທຶນໝູນວຽນໄລຍະສັ້ນ;
- ໄດ້ມີການທົບທວນນະໂຍບາຍວ່າດ້ວຍການບໍລິຫານຄວາມສ່ຽງ ແລະ ດ້ານການດຳເນີນງານ ແລະ ນະໂຍບາຍວ່າດ້ວຍການອອກຜະລິດຕະພັນໃໝ່;
- ໄດ້ເກັບກຳຂໍ້ມູນປະກອບເຂົ້າໃນໂຄງການບາເຊວ 2 ກໍ່ຄືການພັດທະນາຕົວຊີ້ວັດສຳຄັນ ແລະ ການພັດທະນາເຄື່ອງມືການປະເມີນຄວບຄຸມຄວາມສ່ຽງດ້ວຍຕົນເອງ;
- ໄດ້ນຳສົ່ງຜົນການຄົ້ນຄວ້າການປັບປຸງພາລະບົດບາດຂອງສະພາບໍລິຫານ ແລະ ຄະນະກຳມະການຄຸ້ມຄອງຄວາມສ່ຽງຂອງສະພາບໍລິຫານ ໃຫ້ແກ່ຄະນະກຳມະການຮັບຜິດຊອບຄົ້ນຄວ້າ, ທົບທວນ ແລະ ປັບປຸງກົດລະບຽບຂອງ ທຄຕລ ເພື່ອສະເໜີກອງປະຊຸມຜູ້ຖືຮຸ້ນພິຈາລະນາ ແລະ ຮັບຮອງ;

**3.3 ຄະນະກຳມະການກຳນົດຄ່າຕອບແທນ**

ຄະນະກຳມະການ ໄດ້ເອົາໃຈໃສ່ໃນການຄົ້ນຄວ້າພິຈາລະນາຮັບຮອງເອົາລະບຽບນະໂຍບາຍ ຂອງ ທຄຕລ ແນໃສ່ຜົນປະໂຫຍດຂອງ ທຄຕລ ແລະ ຜູ້ຖືຮຸ້ນ ຊຶ່ງຄະນະກຳມະການໄດ້ຄົ້ນຄວ້າບັນດາລະບຽບການຕ່າງໆ ເພື່ອໃຫ້ສາມາດນຳສະເໜີຮັບຮອງຕາມສະພາບໍລິຫານ ທຄຕລ ຕາມຂັ້ນຕອນ.

**3.4 ຄະນະກຳມະການຄຸ້ມຄອງບໍລິຫານ**

ໃນໄລຍະໄຕມາດ 01/2021 ທີ່ຜ່ານມາ ຄະນະກຳມະການຄຸ້ມຄອງບໍລິຫານ ໄດ້ເປີດກອງປະຊຸມເພື່ອຄົ້ນຄວ້າພິຈາລະນາຮັບຮອງຜົນການດຳເນີນງານຂອງ ທຄຕລ ແລະ ບັນຫາຕ່າງໆ ທີ່ຈະສະເໜີຜ່ານສະພາບໍລິຫານ ຈຳນວນ 01 ຄັ້ງ ເຊິ່ງໄດ້ຮັບຮອງບາງເນື້ອໃນທີ່ສຳຄັນດັ່ງນີ້:

- ຄະນະກຳມະການໄດ້ຕິດຕາມຊຸກຍູ້ໃຫ້ທິດຊີ້ນຳຕໍ່ຜົນການດຳເນີນທຸລະກິດຂອງ ທຄຕລ ເປັນປະຈຳ ຢ່າງໃກ້ຊິດ;
- ຕິດຕາມການຈັດຕັ້ງປະຕິບັດຜົນການດຳເນີນທຸລະກິດ, ແຜນດຳເນີນງານປະຈຳປີ, ແຜນຍຸດທະສາດໄລຍະຍາວ ແລະ ການປະຕິບັດແຜນງານ, ໂຄງການ ຕ່າງໆ;
- ຮັບຮອງເອົາແຜນຍຸດທະສາດໄລຍະຍາວຂອງ ທຄຕລ 2021 – 2025 ເພື່ອນຳສະເໜີຕໍ່ກອງປະຊຸມສະພາບໍລິຫານ ແລະ ກອງປະຊຸມຜູ້ຖືຮຸ້ນພິຈາລະນາຮັບຮອງ;
- ຮັບຮອງເອົາວາລະກອງປະຊຸມຜູ້ຖືຮຸ້ນ ທຄຕລ ປະຈຳປີ 2020 ເພື່ອນຳສະເໜີຕໍ່ກອງປະຊຸມສະພາບໍລິຫານພິຈາລະນາຮັບຮອງ.

**3.5 ຄະນະກຳມະການຄັດເລືອກ**

ຄະນະກຳມະການ ໄດ້ຄົ້ນຄວ້າພິຈາລະນາບຸກຄະລາກອນຂັ້ນຄະນະບໍລິຫານງານ ເພື່ອສະເໜີຂໍແຕ່ງຕັ້ງຕຳແໜ່ງງານໃໝ່ ແລະ ຊັບຊ້ອນໝູນວຽນບັນດາຕຳແໜ່ງງານ ຂອງ ທຄຕລ ໃຫ້ມີຄວາມເໝາະສົມສອດຄ່ອງກັບສະພາບໃນແຕ່ລະໄລຍະ ຢູ່ ພະແນກ, ສູນ ສຳນັກງານໃຫຍ່ ແລະ ສາຂາ ທຄຕລ ທົ່ວລະບົບ. ສືບຕໍ່ຄົ້ນຄວ້າພິຈາລະນາລາຍຊື່ບຸກຄະລາກອນເພື່ອສະເໜີປະກອບເຂົ້າລາຍຊື່ຂອງສະພາບໍລິຫານ ທຄຕລ ຊຸດໃໝ່ ເພື່ອນຳສະເໜີສະພາບໍລິຫານ ແລະ ກອງປະຊຸມຜູ້ຖືຮຸ້ນ ທຄຕລ ຮັບຮອງ, ພ້ອມທັງພິຈາລະນາຮັບຮອງບັນດາຕຳແໜ່ງງານໃໝ່ ແລະ ການຊັບຊ້ອນ ພະນັກງານຂັ້ນຄະນະບໍລິຫານງານ ຂອງ ທຄຕລ ຈຳນວນໜຶ່ງ.

**3.6 ຄະນະກຳມະການກວດສອບ**

- ຕິດຕາມພະນັກງານໃນການປະຕິບັດລະບຽບ, ສິດ, ຂັ້ນຕອນ, ຕ້ອງເອົາໃຈໃສ່ໃນວຽກງານການກວດກາສຸກເສີນ, ເຝົ້າລະວັງບັນຫາຂໍ້ພົບເຫັນຕ່າງໆ ແລະ ການຕຳນິສິ່ງຂ່າວຈາກລູກຄ້າ, ເພື່ອໃຫ້ຮັບປະກັນແກ້ໄຂບັນຫາທັນການ. ຕິດຕາມການປະຕິບັດສິດການປ່ອຍສິນເຊື່ອຂອງສາຂາ ນຳໃຊ້ມາດຕະການແກ້ໄຂບັນຫາຕ່າງໆໃຫ້ເໝາະສົມ;
- ດຳເນີນການກວດກາປົກກະຕິ, ກວດກາສະເພາະກິດ, ກວດກາສະເພາະດ້ານ ແລະ ກວດກາສຸກເສີນຂອງບັນດາພະແນກ, ສູນ ແລະ ສາຂາ ທຄຕລ. ພ້ອມທັງຕິດຕາມການແກ້ໄຂຂໍ້ພົບເຫັນຈາກກວດກາພາຍໃນ-ພາຍນອກ ຂອງບັນດາພະແນກການ, ສາຂາ ທຄຕລ ທົ່ວລະບົບ;
- ຕິດຕາມວຽກງານການແກ້ໄຂຂໍ້ພົບເຫັນຂອງກວດສອບຢ່າງເປັນປົກກະຕິ;
- ສຳເລັດການສະໜອງຂໍ້ມູນເອກະສານການເງິນ ທຄຕລ ປະຈຳປີ 2020 ໃຫ້ບໍລິສັດກວດສອບ ເພື່ອໃຫ້ສາມາດອອກບົດລາຍງານຕາມມາດຖານລາວ ແລະ ມາດຖານສາກົນ ຕາມສັນຍາທີ່ໄດ້ກຳນົດໄວ້;
- ສຳເລັດການອອກບົດລາຍງານການກວດສອບເອກະສານຖານະການເງິນ ທຄຕລ ຕາມມາດຕະຖານລາວ ປະຈຳປີ 2020 ເພື່ອສະເໜີສະພາບໍລິຫານຮັບຮອງ.

**V. ຄວາມຮັບຜິດຊອບໃນສັງຄົມ:**

➢ **ການມີສ່ວນຮ່ວມໃນວຽກງານສັງຄົມ ແລະ ອຸປະຖຳສັງຄົມ**

ຄຽງຄູ່ກັບການດຳເນີນທຸລະກິດ ແລະ ປະຕິບັດວຽກງານດ້ານອື່ນໆ ໃນໄລຍະໄຕມາດ 01/2021, ຄະນະຜູ້ບໍລິຫານ ແລະ ພະນັກງານຂອງ ທຄຕລ ທຸກຄົນ ລ້ວນແຕ່ໄດ້ເອົາໃຈໃສ່ໃນການປະກອບສ່ວນ ແລະ ມີສ່ວນຮ່ວມໃນໂຄງການຄວາມຮັບຜິດຊອບຕໍ່ສັງຄົມ (Corporate Social Responsibility ຫຼື CSR) ເຊິ່ງເປັນໜຶ່ງໃນບັນດາຄຸນຄ່າຫຼັກຂອງ ທຄຕລ ເຊິ່ງມີລາຍລະອຽດລຸ່ມນີ້:

- ການນຳໃຊ້ທ່າແຮງທາງດ້ານເທັກໂນໂລຢີ ແລະ ຄວາມທັນສະໄໝຂອງ ທຄຕລ ໃນການພັດທະນາຜະລິດຕະພັນມາຮັບໃຊ້ສັງຄົມ ເຊັ່ນ: BCEL One Heart ເຊິ່ງເຮັດໜ້າທີ່ເປັນເຄື່ອງມື ແລະ ເປັນສື່ກາງໃນການຮັບບໍລິຈາກເງິນຊ່ວຍເຫຼືອສັງຄົມ ທີ່ອຳນວຍຄວາມສະດວກໃຫ້ທັງຜູ້ຂໍຮັບບໍລິຈາກ ແລະ ຜູ້ສະໝັກໃຈບໍລິຈາກ ທີ່ໄດ້ເປີດຮັບບໍລິຈາກ ທັງໝົດ 06 ໂຄງການເຊັ່ນ: ລະດົມທຶນຊ່ວຍເຫຼືອໜ່ວຍກູ້ຊີບອົງການກາແດງລາວ; ລະດົມທຶນໃຫ້ການຊ່ວຍເຫຼືອເພື່ອຕ້ານໂລກລະບາດ COVID-19; ໂຄງການລະດົມທຶນຊ່ວຍເຫຼືອໂຮງໝໍແຂວງຫຼວງພະບາງເພື່ອຄວບຄຸມ ແລະ ແກ້ໄຂການລະບາດຂອງ COVID-19; ລະດົມທຶນຊື້ອຸປະກອນການແພດເພື່ອຊ່ວຍເຫຼືອເດັກນ້ອຍຂອງໂຮງໝໍເພື່ອນລາວສຳລັບເດັກນ້ອຍ; ລະດົມທຶນຊ່ວຍປຸກສ້າງທີ່ພັກອາໄສໃຫ້ແກ່ຄອບຄົວຂອງ ທ້າວ ຈອນ ທີ່ຖືກອັກຄີໄພ ເມືອງ ນາກາຍ, ແຂວງ ຄຳມ່ວນ ແລະ ລະດົມທຶນຊ່ວຍເຫຼືອປຸກເຮືອນໃຫ້ຜູ້ທີ່ທຸກຍາກອະນາຖາ ຢູ່ 05 ເມືອງ ຂອງແຂວງຫຼວງນ້ຳທາ ເຊິ່ງມີຜູ້ຮ່ວມບໍລິຈາກທັງໝົດ 4.682 ຄັ້ງ, ເປັນຈຳນວນເງິນ 317 ລ້ານກວ່າກີບ.

- ທຄຕລ ໄດ້ປະກອບສ່ວນຊຸກຍູ້ ແລະ ຊ່ວຍເຫຼືອສັງຄົມຜ່ານຫຼາຍຮູບການ ເປັນຕົ້ນແມ່ນ ການອຸປະຖຳ ວຽກງານການສຶກສາ ແລະ ກິລາ, ວຽກງານສາທາລະນະສຸກ, ຊ່ວຍເຫຼືອຜູ້ປະສົບໄພທຳມະຊາດ, ຊຸກຍູ້ວັນບຸນສຳຄັນຕ່າງໆຂອງຊາດ ແລະ ອື່ນໆ ດ້ວຍການມອບເງິນສົດ, ວັດຖຸອຸປະກອນຕ່າງໆ ຄິດເປັນຈຳນວນເງິນທັງໝົດຫຼາຍກວ່າ 394 ລ້ານກວ່າກີບ.

**ຜູ້ອຳນວຍການໃຫຍ່**

**ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ**

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ BANQUE POUR LE COMMERCE EXTERIEUR LAO PUBLIC

**ພູຂຽງ ຈັນທະຈັກ**